CALIFORNIA DEPARTMENT OF FOOD & AGRICULTURE

ສຸຂະພາບຂອງໝູ



# ອັນຕະລາຍທີ່ກ່ຽວຂ້ອງກັບການເອົາອາຫານດິບ ຫລື ອາຫານເຫລືອທີ່ເຮັດບໍ່ສຸກເກືອໝູ

**ການເອົາອາຫານເຫລືອໃຫ້ໝູກິນໂດຍທົ່ວໆໄປແລ້ວກໍຍັງເອີ້ນວ່າການເອົາອາຫານເນົ່າເກືອໝູ ຫລື ເຂົ້າໝູ.**
**ພາສາສະເປນເອີ້ນວ່າ *Escamocha, Lavaza, Descarte, Friegue, Filtradas* ແລະ *Sobras***

## ການເອົາອາຫານດິບ ຫລື ອາຫານທີ່ເຮັດບໍ່ສຸກເກືອໝູ ອາດຈະສາມາດເຮັດໃຫ້ໂຣກກ່ຽວກັບສັດແຜ່ລາມ ແລະ ເປັນອັນຕະລາຍຕໍ່ສາທາລະນະ

ຜູ້ລ້ຽງໝູບາງຄົນອາດຈະບໍ່ຮູ້ວ່າການເອົາອາຫານທີ່ ເຫລືອ ຫລື ບໍ່ສຸກໃຫ້ໝູກິນ ອາດເປັນການສ່ຽງອັນຕະລາຍທີ່ຈະເຮັດໃຫ້ໂຣກກ່ຽວກັບສັດທີ່ຮ້າຍແຮງເກີດຂື້ນ.

## ອາຫານທີ່ເຫລືອແມ່ນຫຍັງ?

ອາຫານເຫລືອໝາຍເຖິງອາຫານທີ່ກິນເຫລືອຈາກຈານເຂົ້າ, ອາຫານເຫລືອຈາກເຮືອນຄົວ ແລະ ໂຕະອາຫານ, ຂີ້ເຫຍື້ອ ຫລື ເຂົ້າໝູ, ແລະ ອາຫານທີ່ເຫລືອກິນທຸກປະເພດ. ມັນອາດຈະປະກອບດ້ວຍສິ່ງໃດສິ່ງໜຶ່ງທີ່ກິນໄດ້ ຫລືຂອງເສດເຫລືອຈາກການຜະລິດ, ວິທີການເຮັດ,ການຂົນສົ່ງ, ການແຈກຢາຍ, ຫລື ການບໍລິໂພກອາຫານ.

## ການສ່ຽງໄພທາງພະຍາດ

ຊີ້ນເປື້ອນທີ່ມີຢູ່ໃນອາຫານທີ່ເຫລືອສາມາດເຮັດໃຫ້ເກີດພະຍາດເຊິ່ງອາດຈະແຜ່ລາມຫາສັດລ້ຽງອື່ນໆ ຫລື ຄົນໄດ້. ສິ່ງຂອງທີ່ເຮັດດ້ວຍສັດເຂົ້າປະເທດຢ່າງຜິດກົດໝາຍ, ດັ່ງເຊັ່ນຊີ້ນ ແລະ ໄສ້ອົ່ວ, ອາດຈະເຮັດໃຫ້ມີການລະບາດໂຣກທາງສັດຕ່າງປະເທດໄດ້ ດັ່ງເຊັ່ນ ພະຍາດຕີນ ແລະ ປາກ, ໄຂ້ໝູ,ໄຂ້ໝູອາຟຣິກາ, ພະຍາດຕຸ່ມໝູ, ໂຣກຄ້າຍໆກັບໂຣກໝາວໍ້ ຫລື ພະຍາດ ໂອເຈສກີ, ໂຣກບຣູເສໂລສິສ, ໂຣກປອດແຫ້ງ ແລະ ແກສໂຕຣເອນເທໄຣທິສ (ໂຣກກ່ຽວກັບກະເພາະ) ຕິດຕໍ່ກັນໄດ້ຖ້າອາຫານທີ່ເກືອໝູເຮັດຢ່າງບໍ່ເໝາະສົມ. ສິ່ງທີ່ເປັນຫ່ວງຂອງສາທາລະນະລັດທີ່ອາດຈະມີຢູ່ໃນອາຫານທີ່ເຫລືອຈາກແຫລ່ງອື່ນໆແມ່ນ *Salmonella, Campylobacter, Trichinella*, ແລະ *Toxoplasma*.

## ການເຮັດອາຫານເຫລືອໃຫ້ສຸກ

### *ຊີ້ນດິບທີ່ມີຢູ່ໃນອາຫານເຫລືອຕ້ອງເຮັດໃຫ້ສຸກ*

ອາຫານເຫລືອ ຫລື ຂອງຖິ້ມທີ່ຈະເກືອໝູຕ້ອງເຮັດໃຫ້ສຸກ, ດັ່ງທີ່ໄດ້ອອກຄຳສັ່ງໂດຍພະລາດຊະບັນຍັດແຫ່ງການປ້ອງກັນສຸຂະພາບຂອງໝູປີ 1980, ເພື່ອຈະເຮັດໃຫ້ການສ່ຽງພະຍາດສັດຕ່າງປະເທດໃຫ້ໜ້ອຍລົງ ແລະ ເພື່ອຈະກຳຈັດພະຍາດອື່ນໆ. ອາຫານທັງໝົດທີ່ເຫລືອຈາກໂຕະອາຫານ ຫລື ຈານເຂົ້າ ຫລື ເຫລືອຈາກການຕຽມອາຫານ ຫລື ເຫລືອນີ້ຕ້ອງເຮັດໃຫ້ສຸກເສຍກ່ອນທີ່ຈະເກືອໝູ. ກົດໝາຍກ່ຽວກັບສຸຂະພາບຂອງໝູໄດ້ບອກວ່າອາຫານທີ່ບໍ່ແມ່ນຊີ້ນ ຫລື ຂອງເສດເຫລືອທີ່ເຮັດດ້ວຍຊີ້ນດັ່ງເຊັ່ນເສດຂະໜົມ ຫລື ເສດຜັກ, ແລະ ອື່ນໆ ບໍ່ຈຳເປັນຕ້ອງເຮັດໃຫ້ສຸກກໍໄດ້.

ໃນລັດຄາລີໂຟເນຍ,ອາຫານເຫລືອທີ່ເປັນຊີ້ນຕ້ອງຕົ້ມໃຫ້ສຸກໄຟແຮງ (212 ອົງສາ F ຫລື 100 ອົງສາ C) ປະມານ 2 (ສອງ) ຊົ່ວໂມງ; ແລະ ຕ້ອງຄົນເລື້ອຍໆຕອນເຮັດເພື່ອໃຫ້ແນ່ໃຈວ່າຄວາມຮ້ອນຂອງໄຟທີ່ໄດ້ບົ່ງບອກໄວ້ນັ້ນສະໝ່ຳ ສະເໝີ ແລະ ຕົ້ມໃຫ້ເຕັມເວລາ.

## ຮ້ານອາຫານ, ຜູ້ຂົນສົ່ງອາຫານ ແລະ ຜູ້ທີ່ຖິ້ມອາຫານເຫລືອ

ການຄ້າທີ່ຕ້ອງຕຽມອາຫານ ຫລື ຂາຍອາຫານ (ຮ້ານອາຫານ, ,ໂຮງແຮມ, ຮ້ານຂາຍຂອງກິນໄວ, ໂຮງໝໍ, ໂຮງຮຽນ ແລະ ສະຖາບັນຕ່າງໆ) ບໍ່ຄວນຈະຖິ້ມອາຫານໃນວິທີທີ່ສັດທີ່ກິນເສດອາຫານເຫລືອຈະສາມາດຫາກິນໄດ້. ເຊັ່ນດຽວກັນນີ້, ຜູ້ທີ່ຕ້ອງຈັດການນຳອາຫານ, ຂົນສົ່ງ ຫລື ຖິ້ມອາຫານບໍ່ຄວນຈະຖິ້ມອາຫານໃນວິທີທີ່ສັດທີ່ກິນເສດອາຫານເຫລືອຈະສາມາດຫາກິນໄດ້. ໝາກໄມ້, ຜັກ ແລະ ເຂົ້າຈີ່ເຫລືອທີ່ຢູ່ໃນຈານດຽວກັນກັບສິ່ງທີ່ເຮັດດ້ວຍຊີ້ນ ແລະ ຂອງເສດເຫລືອຈາກຊີ້ນບໍ່ຄວນຈະເອົາເກືອໝູເວັ້ນແຕ່ວ່າໄດ້ເຮັດໃຫ້ສຸກຢ່າງເໝາະສົມແລ້ວ.

## ເຈົ້າຂອງຂອງສັດລ້ຽງ

ເຖິງແມ່ນວ່າບາງຄົນອາດຈະຄິດວ່າອາຫານເຫລືອນັ້ນເປັນອາຫານຖືກ, ແຕ່ມັນສາມາດເຮັດໃຫ້ອຸດສາຫະກຳສັດລ້ຽງ ແລະ ເສດຖະກິດທັງໝົດມີອັນຕະລາຍໄດ້. ເຈົ້າຂອງຂອງສັດລ້ຽງບໍ່ຄວນຈະເອົາອາຫານເຫລືອທີ່ບໍ່ສຸກເກືອໝູ. ນີ້ຮ່ວມດ້ວຍອາຫານເຫລືອຈາກບ້ານ ຫລື ຈາກຮ້ານອາຫານ.

## ການເດີນທາງຕ່າງປະເທດ

### *ຢ່າໃຫ້ເອົາສິ່ງທີ່ຜະລິດດ້ວຍສັດຈາກປະເທດອື່ນໆເຂົ້າສະຫະລັດອາເມຣິກາ*

ພະຍາດສັດຕ່າງປະເທດຈະເຂົ້າມາລັດຄາລີຟໍເນຍໄດ້ຜ່ານການນຳເອົາສິນຄ້າທີ່ເຮັດດ້ວຍສັດທີ່ຖືກຫ້າມເຂົ້າມາ. ຊີ້ນ, ໄສ້ອົ່ວ, ຊີ້ນໝູແບບເມັກຊິກັນ (ໂຊຣິໂຊ), ແລະ ນົມທີ່ບໍ່ໄດ້ຂ້າເຊື້ອໂຣກຈາກປະເທດອື່ນໆສາມາດນຳວາຍແຣັດ, ແບກເທເລຍ ຫລື ໂຣກຮ່າທີ່ສາມາດເປັນເຫດໃຫ້ມີການລະບາດຂອງພະຍາດສັດຕ່າງໆປະເທດໄດ້ ດັ່ງເຊັ່ນພະຍາດຕີນ ແລະ ປາກ, ໄຂ້ໝູ,ໄຂ້ໝູອາຟຣິກາ, ພະຍາດຕຸ່ມໝູ. ຖ້າຫາກສົງໄສ, ໃຫ້ແຈ້ງສິ່ງຂອງເຫລົ່ານີ້ຕໍ່ເຈົ້າໜ້າທີ່ກວດສິ່ງຂອງຢູ່ດ່ານເຂົ້າເມືອງ.

**ຕ້ອງເອົາອາຫານແນວໃດເກືອໝູ?**

ຕ້ອງເກືອໝູດ້ວຍອາຫານທີ່ຕຽມອັດຕາສ່ວນເພື່ອການຄ້າ, ພືດປະເພດເຂົ້າ, ໝາກໄມ້ ແລະ ຜັກຈາກຕະຫລາດ. ໝາກໄມ້, ຜັກ ແລະ ເຂົ້າຈີ່ເຫລືອທີ່ຢູ່ໃນຈານດຽວກັນກັບສິ່ງທີ່ເຮັດດ້ວຍຊີ້ນ ແລະ ຂອງເສດເຫລືອຈາກຊີ້ນບໍ່ຄວນຈະເອົາເກືອໝູເວັ້ນແຕ່ວ່າເຮັດໃຫ້ສຸກຢ່າງເໝາະສົມແລ້ວ. ບໍ່ຄວນຈະເອົາເຂົ້າຈີ່ປະກອບດ້ວຍຊີ້ນປະເພດໃດກໍຕາມ (ໝູເຄັມ ຫລື ແຮມ) ຫລື ເສດນົມທີ່ຕົ້ນກຳເນີດມາຈາກບໍລິສັດເຮັດນົມທີ່ບໍ່ມີໃນອະນຸຍາດຢ່າງຖືກຕ້ອງ.

**ການປ້ອງກັນພະຍາດ**

- ເມື່ອເດີນທາງ, ບໍ່ຄວນຈະນຳເອົາສິ່ງທີ່ເຮັດດ້ວຍສັດ, ດັ່ງເຊັ່ນ ຊີ້ນ, ໄສ້ອົ່ວ, ຊີ້ນໝູແບບເມັກຊິກັນ (ໂຊຣິໂຊ) ແລະ ນົມທີ່ບໍ່ໄດ້ຂ້າເຊື້ອໂຣກເຂົ້າປະເທດ.
- ຢ່າເອົາຂອງກິນເຫລືອທີ່ດິບ ຫລື ທີ່ເຮັດບໍ່ສຸກ, ຂອງກິນເຫລືອຈາກໂຕະອາຫານ ຫລື ຊາກສັດເກືອໝູ.
- ຢ່າເອົາຊາກສັດຈາກການຍິງສັດ ຫລື ສັດທີ່ກັກໄດ້ດັ່ງເຊັ່ນໝູເຟຣາລ ຫລື ກວາງໃຫ້ໝູກິນ.
- ອ້ອມຮົ້ວໃຫ້ດີເພື່ອປ້ອງກັນບໍ່ໃຫ້ໝູປ່າເຂົ້າມາຫາໝູລ້ຽງ.
- ຮັກສາຄວາມສະອາດໃຫ້ດີ, ຂ້າເຊື້ອໂຣກ ແລະ ເຮັດໃຫ້ເຄື່ອງໃຊ້ຕ່າງໆໃຫ້ແຫ້ງ, ເຄື່ອງນຸ່ງ, ລົດທີ່ຕິດກົ້ນລົດ ຫລື ສິ່ງຂອງຕ່າງໆທີ່ສຳພັດນຳສັດມາຈາກແຫລ່ງອື່ນ.
- ປ້ອງກັນບໍ່ໃຫ້ສັດລ້ຽງໃນເຂດຂອງທ່ານເຈືອປົນ ຫລື ກ່ຽວຂ້ອງນຳສັດລ້ຽງຈາກເຂດອື່ນ.
- ໃຫ້ໃຊ້ ແລະ ຮັກສາໂຄງການປ້ອງກັນສັດກັດແທ້ນຢ່າງມີປະສິດທິພາບ. ຄວາມປອດໄພທາງຊີວະວິທະຍາ ແລະ ທຳຄວາມສະອາດດີ, ການຮັກສາຊີງເຂດຢ່າງດີ, ການຕິດແຮ້ວ ແລະ ການດັກຈັບເປັນພາກສ່ວນປ້ອງກັນຈາກສັດກັດແທ້ນ.

*ການຮັກສາປ້ອງກັນພະຍາດສັດຕ່າງປະເທດອອກຈາກສະຫະລັດອາເມຣິກາເປັນໜ້າທີ່ຮັບຜິດຊອບຂອງທຸກໆຄົນ! ທ່ານຈະຮູ້ສຶກແນວໃດຖ້າທ່ານເປັນຜູ້ນຳເອົາພະຍາດຕີນ ແລະ ປາກ ເຂົ້າມາສູ່ລັດຄາລີຟໍເນຍ? ປ້ອງກັນໃຫ້ພະຍາດສັດຕ່າງປະເທດອອກຈາກລັດຄາລີຟໍເນຍ. ຢ່າເອົາອາຫານດິບ ຫລື ອາຫານເຫລືອທີ່ບໍ່ໄດ້ເຮັດຢ່າງເໝາະສົມເກືອໝູ.*

**ສັດຕະວະແພດຂອງທ່ານເປັນແຫລ່ງຂໍ້ມູນທີ່ດີເລີດກ່ຽວກັບພະຍາດຂອງໝູ.**
**ສຳລັບຂໍ້ມູນເພີ່ມເຕີມໃຫ້ຕິດຕໍ່:**

----------------------------------------

**California Department of Food and Agriculture**
**(ກະຊວງຝ່າຍອາຫານ ແລະ ການກະສິກຳຂອງລັດຄາລີຟໍເນຍ)**
http://www.cdfa.ca.gov
**Animal Health Branch**
**(ສາຂາຝ່າຍສຸຂະພາບຂອງສັດ)**
1220 N Street, Room A-107
Sacramento, CA 95814

| | |
|---|---|
| ສຳນັກງານໃຫຍ່ | (916) 654-1447 |
| ເຂດ Redding | (530) 225-2140 |
| ເຂດ Modesto | (209) 491-9350 |
| ເຂດ Tulare | (559) 685-3500 |
| ເຂດ Ontario | (909) 947-4462 |

**United States Department of Agriculture**
**(ກະຊວງການກະສິກຳຂອງສະຫະລັດອາເມຣິກາ)**
http://www.usda.gov
**Veterinary Services**
**(ການຊ່ອຍເຫລືອຝ່າຍສັດຕະວະແພດ)**
10365 Old Placerville Road, Suite 210
Sacramento, CA 95827
(916) 854-3900 ຫລື (877) 741-3690